**ມິຊຊາອາທິດທີ 26 ກຳນົດທຳມະດາ ປີ B**

**ວັນອາທິດທີ 30 ກັນຍາ 2018**



**ພຣະວໍລະສານໂດຍນັກບຸນມາກໂກ 9, 37-42, 44, 46-48**

ໃນເວລານັ້ນ, ຢວງທູນພຣະເຢຊູເຈົ້າວ່າ: ພຣະອາຈານເອີຍ ພວກຂ້ານ້ອຍໄດ້ເຫັນຄົນຜູ້ໜຶ່ງໄລ່ຜີເດຊະພຣະນາມຂອງພຣະອົງ, ພວກຂ້ານ້ອຍຈຶ່ງໄດ້ຫ້າມເຂົາ. ຍ້ອນວ່າຄົນຜູ້ນັ້ນບໍ່ໄດ້ເປັນໝູ່ກັບພວກເຮົາ.

ພຣະເຢຊູເຈົ້າຈຶ່ງຕອບວ່າ: ພວກເຈົ້າຢ່າຫ້າມເຂົາ ຍ້ອນວ່າບໍ່ມີໃຜໃຊ້ພຣະນາມຂອງເຮົາທຳອັດສະຈັນ ແລ້ວມາເວົ້າຮ້າຍປ້າຍສີໃສ່ເຮົາໄດ້. ຜູ້ໃດບໍ່ຂັດສູ້ກັບພວກເຮົາ ກໍເປັນໝູ່ກັບພວກເຮົາ. ຜູ້ໃດທານນ້ຳຈອກໜຶ່ງໃຫ້ພວກເຈົ້າກິນ ຍ້ອນພວກເຈົ້າເປັນຄົນຂອງພຣະກຣິສໂຕ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ ຄົນຜູ້ນັ້ນຈະບໍ່ຂາດບຳເນັດລາງວັນດອກ.

ຖ້າຜູ້ໃດເປັນເຫດໃຫ້ເດັກຜູ້ໜຶ່ງໃນພວກນີ້ທີ່ເຊື່ອຕ້ອງຕົກໃນບາບ ກໍໃຫ້ເອົາຫີນບົດແປ້ງທີ່ລາໃຊ້ແກ່ນັ້ນມາຜູກໃສ່ຄໍຜູ້ນັ້ນແລ້ວຖິ້ມລົງທະເລຄົງຈະດີກວ່າ.

ຖ້າມືຂອງເຈົ້າເປັນເຫດໃຫ້ເຈົ້າຕົກໃນບາບ ກໍຈົ່ງຕັດມັນຖິ້ມເສຍ. ເປັນຄົນແຂນກຸດເບື້ອງໜຶ່ງເຂົ້າສະຫວັນ ກໍຍັງດີກວ່າມີສອງມືໃນໄຟທີ່ບໍ່ມີຍາມມອດ.

ຖ້າຕີນຂອງເຈົ້າເປັນເຫດໃຫ້ເຈົ້າຕົກໃນບາບ ກໍຈົ່ງຕັດມັນແກວ່ງຖິ້ມເສຍ. ເປັນຄົນຂາກຸດເບື້ອງໜຶ່ງເຂົ້າສະຫວັນ ກໍຍັງດີກວ່າມີສອງຂາໃນນະລົກ.

ຖ້າຕາຂອງເຈົ້າເປັນເຫດໃຫ້ເຈົ້າຕົກໃນບາບ ກໍຈົ່ງຄວັດມັນແກວ່ງຖິ້ມເສຍ. ເປັນຄົນຕາລໍເຂົ້າໃນອານາຈັກຂອງພຣະເຈົ້າ ກໍດີກວ່າມີສອງຕາຢູ່ໃນນະລົກບ່ອນໜອນບໍ່ຕາຍ, ບ່ອນໄຟບໍ່ມອດເລີຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: 9, 37-42, 44, 46-48**

ຄຳຖາມຂອງຢວງທີ່ຖາມພຣະເຢຊູເຈົ້າໃນວັນນີ້ກ່ຽວກັບຄົນໜຶ່ງທີ່ບໍ່ໄດ້ຢູ່ໃນກຸ່ມຂອງເຂົາ ແຕ່ໃຊ້ພຣະນາມຂອງພຣະອົງເພື່ອຂັບໄລ່ຜີປີສາດ. ຄຳຖາມນີ້ໃນແງ່ໜຶ່ງເບິ່ງຄືຢວງມີຄວາມໝັ້ນໃຈແລະຫວງແຫນລິກະສິດໃນການເປັນສິດຂອງພຣະເຢຊູເຈົ້າ. ເວົ້າອີກຢ່າງໜຶ່ງກໍຄືຜູ້ທີ່ເປັນສິດຂອງພຣະເຢຊູເຈົ້ານັ້ນຕ້ອງຢູ່ໃນກຸ່ມພິເສດແລະມີຈຳນວນຈຳກັດເທົ່ານັ້ນ. ເພາະສະນັ້ນ, ຄົນທີ່ບໍ່ຮູ້ຈັກພຣະເຢຊູເຈົ້າ, ບໍ່ໄດ້ເປັນສິດຂອງພຣະອົງຈະເອີ່ຍເຖິງພຣະນາມຂອງພຣະອົງເພື່ອປິ່ນປົວພະຍາດແລະຂັບໄລ່ຜີນັ້ນບໍ່ໄດ້. ແລະຄວາມໝາຍອີກແງ່ໜຶ່ງກໍຄືຜູ້ທີ່ບໍ່ຮູ້ຈັກພຣະເຢຊູເຈົ້າຈະບໍ່ໄດ້ຮັບຄວາມຣອດຈາກພຣະອົງ.

ແຕ່ພຣະເຢຊູເຈົ້າຕອບຢວງວ່າ: ຜູ້ໃດບໍ່ຂັດສູ້ກັບພວກເຮົາ ກໍເປັນໝູ່ກັບພວກເຮົາ. ໝາຍຄວາມວ່າທຸກຄົນສາມາດເປັນລູກສິດຂອງພຣະເຢຊູເຈົ້າໄດ້. ທຸກຄົນມີສິດໄດ້ຮັບຄວາມຣອດຖ້າເຂົາເຊື່ອເຖິງພຣະນາມຂອງພຣະອົງ. ກົງກັນຂ້າມ, ຖ້າຜູ້ທີ່ເປັນສິດຂອງພຣະເຢຊູເຈົ້າແລ້ວຫາກມີຊີວິດບໍ່ເໝາະສົມກັບຄຳສອນຂອງພຣະອາຈານແລະເປັນແບບຢ່າງບໍ່ດີໃຫ້ກັບຄົນອື່ນ ຜູ້ນັ້ນກໍບໍ່ສົມຄວນກັບອານາຈັກຂອງພຣະອົງ.

ຄຳສອນຂອງພຣະເຢຊູເຈົ້າໃນວັນນີ້ບໍ່ໄດ້ຢູ່ໃນອະດີດສອງພັນປີທີ່ຜ່ານມາແລ້ວແຕ່ມັນເປັນປັດຈຸບັນຢູ່ສະເໝີ. ເພາະທຸກວັນນີ້, ກໍມີຜູ້ເປັນລູກສິດຂອງພຣະເຢຊູເຈົ້າ, ຜູ້ທີ່ໄດ້ຖືກເລືອກສັນແລະສົ່ງໄປເພື່ອເປັນພິຍານແລະນຳພາຝູງແກະຂອງພຣະອົງ, ແທນທີ່ພວກເຂົາຈະໃຊ້ຊີວິດແລະເປັນແບບຢ່າງທີ່ດີໃຫ້ກັບຄົນອື່ນ. ພວກເຂົາພັດທຳໃຫ້ຄົນອື່ນຕ້ອງສະດຸດແລະເສຍຄວາມເຊື່ອ ເປັນຕົ້ນແມ່ນບັນດາເດັກນ້ອຍໄວໜຸ່ມຂອງພຣະກຣິສຕະຈັກ.

ວາຈາຂອງພຣະເຈົ້າໃນວັນນີ້ຍັງທຳໃຫ້ພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າ, ຜູ້ເປັນກຣິສຕັງກາໂທລິກແຕ່ດົນນານມາແລ້ວໄດ້ເຂົ້າໃຈຢ່າງແຈ່ມແຈ້ງວ່າ ບໍ່ແມ່ນແຕ່ອ້າງເຖິງນາມຊື່ກຣິສຕັງ ຫລືຄວາມຮູ້ກ່ຽວກັບພຣະທຳຄຳສອນຂອງພຣະເຢຊູເຈົ້າເທົ່ານັ້ນຈຶ່ງສົມເປັນລູກສິດຂອງພຣະອົງ. ແຕ່ການເປັນລູກສິດທີ່ແທ້ຈິງນັ້ນຄືຕ້ອງດຳເນີນຊີວິດໃຫ້ສອດຄ່ອງກັບນາມຊື່ກຣິສຕັງທີ່ໄດ້ຮັບ ຄືການນຳເອົາສິ່ງທີ່ຕົນໄດ້ຮັບຈາກຄຳສອນຂອງພຣະເຢຊູເຈົ້າມາໃຊ້ໃນຊີວິດຂອງຕົນເພື່ອເປັນແບບຢ່າງດີໃຫ້ກັບຄົນອື່ນ ແລະເປັນຕົ້ນຄົນທີ່ຍັງບໍ່ຮູ້ຈັກພຣະອົງ.

ໃນວັນນີ້, ໃຫ້ພວກເຮົາທົບທວນຄືນຊີວິດການເປັນລູກສິດຂອງພຣະເຢຊູເຈົ້າຕັ້ງແຕ່ວັນທີ່ພວກເຮົາຮັບສິນລ້າງບາບ ວ່າພວກເຮົາໄດ້ໃຊ້ຊີວິດກຣິສຕັງຂອງພວກເຮົາຢ່າງໃດ? ພວກເຮົາໄດ້ທຳໃຫ້ນາມຊື່ຂອງພຣະເຢຊູເຈົ້າຮຸ່ງເຮືອງໄປຫລືບໍ່? ພວກເຮົາໄດ້ທຳໃຫ້ຄົນທີ່ບໍ່ຮູ້ຈັກພຣະເຈົ້າໄດ້ເປັນລູກສິດຂອງພຣະອົງບໍ? ຫລືພວກເຮົາໄດ້ທຳໃຫ້ຄົນອື່ນຕ້ອງເສຍຄວາມເຊື່ອຍ້ອນວາຈາ, ການກະທຳແລະແບບຢ່າງບໍ່ດີຂອງພວກເຮົາ?

ຂໍໃຫ້ວາຈາຂອງພຣະເຢຊູເຈົ້າຈົ່ງເປັນໂອສົດປິ່ນປົວຮັກສາແລະຊ່ວຍພວກເຮົາໃຫ້ມີຊີວິດສົມກັບນາມຊື່ກຣິສຕັງນັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ